**ຕົວຢ່າງ** ໜ້ານີ້ໃຊ້ສຳລັບອ້າງອີງເທົ່ານັ້ນ.

Employment Development Department
State of California

| | |
|---|---|
| ວັນທີ | |
| ຊື່ຜູ້ຍື່ນຄຳຮ້ອງ/ລູກຈ້າງ | |
| ໝາຍເລກປະກັນສັງຄົມ XXX-XX- | |
| ສຳນັກງານ EDD ປະຈຳພາກ | |

# ຄຳຮ້ອງຂໍຂໍ້ມູນເງິນຊ່ວຍເຫຼືອຍ້ອນຫຼັງ

ຊື່ແລະທີ່ຢູ່ຂອງນາຍຈ້າງ ຫຼື ຜູ້ຍື່ນຄຳຮ້ອງ:

ພວກເຮົາໄດ້ຮັບແຈ້ງວ່າຜູ້ຍື່ນຄຳຮ້ອງທີ່ມີຊື່ຂ້າງເທິງອາດຈະໄດ້ຮັບເງິນຊ່ວຍເຫຼືອຍ້ອນຫຼັງ. ເງິນຊ່ວຍເຫຼືອຍ້ອນຫຼັງແມ່ນຖືວ່າເປັນຄ່າຈ້າງເພື່ອວັດຖຸປະສົງດ້ານການປະກັນໄພການຫວ່າງງານ ແລະ ຖືກຈັດສັນໄວ້ສຳລັບຈ່າຍໃຫ້ໃນໄລຍະເວລາທີ່ມີສິດໄດ້ຮັບເງິນຊ່ວຍເຫຼືອ. ຖ້າມີການຈ່າຍເງິນຊ່ວຍເຫຼືອປະກັນການຫວ່າງງານ (UI) ແລ້ວສຳລັບໄລຍະເວລານີ້ ຈະຕ້ອງມີການກຳນົດວ່າເປັນການຈ່າຍເງິນໃຫ້ເກີນ.

ຖ້າຂໍ້ຕົກລົງໃນການຈ່າຍເງິນຊ່ວຍເຫຼືອຍ້ອນຫຼັງກຳນົດວ່ານາຍຈ້າງຈະຫຼຸດການຈ່າຍເງິນຊ່ວຍເຫຼືອຍ້ອນຫຼັງລົງເທົ່າກັບຈຳນວນເງິນຊ່ວຍເຫຼືອປະກັນການຫວ່າງງານສຳລັບໄລຍະເວລານັ້ນ, ມາດຕາ 1382 ຂອງປະມວນກົດໝາຍປະກັນການຫວ່າງງານ (Unemployment Insurance Code) ກຳນົດໃຫ້ນາຍຈ້າງຈ່າຍເງິນຊ່ວຍເຫຼືອຄືນໃຫ້ກັບພະແນກພັດທະນາການຈ້າງງານ (EDD). ສາມາດຂໍຮັບຂໍ້ມູນກ່ຽວກັບຈຳນວນເງິນຊ່ວຍເຫຼືອ UI ທີ່ຈ່າຍໃຫ້ໃນໄລຍະເວລາທີ່ໄດ້ຮັບການຄຸ້ມຄອງໂດຍເງິນຊ່ວຍເຫຼືອຍ້ອນຫຼັງໄດ້ຈາກຜູ້ຊ່ຽວຊານດ້ານການຈ່າຍເງິນເກີນ (Overpayment Specialist) ທີ່ຫ້ອງການ EDD ທີ່ລະບຸຂ້າງເທິງ.

ຜູ້ຍື່ນຄຳຮ້ອງ/ລູກຈ້າງຕ້ອງຮັບຜິດຊອບໃນການຈ່າຍເງິນທີ່ມີຜົນກະທົບຕໍ່ກັບເງິນຊ່ວຍເຫຼືອ UI ຄືນຖ້າຈຳນວນເງິນຊ່ວຍເຫຼືອນັ້ນບໍ່ໄດ້ຖືກຫັກອອກຈາກເງິນຊ່ວຍເຫຼືອ.

ກະລຸນາສົ່ງຂໍ້ມູນຕໍ່ໄປນີ້ໄປທີ່ຫ້ອງການ EDD ທີ່ລະບຸຂ້າງເທິງ ເພື່ອຊ່ວຍໃຫ້ພະແນກ EDD ສາມາດກຳນົດຈຳນວນເງິນຊ່ວຍເຫຼືອ UI ທີ່ຈ່າຍໃຫ້ເກີນ ແລະຝ່າຍທີ່ຕ້ອງຮັບຜິດຊອບໃນການຈ່າຍເງິນຄືນ.

| ເງິນຊ່ວຍເຫຼືອແມ່ນສຳລັບ (ໝາຍຂໍດຽວ): ☐ ເງິນຊ່ວຍເຫຼືອຍອນຫຼັງເຕັມຈຳນວນ ☐ ການຈາຍເພື່ອຕົກລົງຊຳລະໜີ້ | |
|---|---|
| ອັດຕາຄາຈາງລາຍຊົ່ວໂມງ<br>$ | ຈຳນວນຊົ່ວໂມງທີ່ເຮັດວຽກຕໍ່ອາທິດ |
| ຈຳນວນເງິນຊວຍເຫຼືອຍອນຫຼັງທັງໝົດ<br>$ | ໄລຍະເວລາທີ່ໄດຮັບຄຸມຄອງໂດຍເງິນຍອນຫຼັງ<br>– |
| ຈຳນວນເງິນທີ່ຖືກຫັກໄວເນື່ອງຈາກເງິນຊວຍເຫຼືອ UI ທີ່ໄດຮັບ<br>$ | ວັນທີ່ທີ່ຈາຍເງິນຍອນຫຼັງ |

**ຜູ້ຍື່ນຄຳຮ້ອງ**: ໜັງສືແຈ້ງການກ່ຽວກັບການຈ່າຍເງິນເກີນຈະຖືກສົ່ງໃຫ້ທ່ານທາງໄປສະນີ ລະບຸວ່າທ່ານຕ້ອງຮັບຜິດຊອບໃນການຊຳລະເງິນທີ່ຈ່າຍໃຫ້ເກີນ ຄືນຫຼືບໍ່.

**ນາຍຈ້າງ**: ຖ້າທ່ານໄດ້ຫຼຸດເງິນຊ່ວຍເຫຼືອຍ້ອນຫຼັງລົງເປັນຈຳນວນເທົ່າກັບເງິນຊ່ວຍເຫຼືອ UI ທີ່ໄດ້ຮັບ ກະລຸນາສົ່ງເງິນທີ່ຊຳລະທາງໄປສະນີໄປທີ່:

Employment Development Department
Document Management Section, MIC 96
P.O. Box 826880
Sacramento, CA 94280-0001

ລວມທັງໃສ່ຊື່ຜູ້ຍື່ນຄຳຮ້ອງ/ລູກຈ້າງ ແລະໝາຍເລກປະກັນສັງຄົມ, ໝາຍເລກບັນຊີເງິນສຳຮອງຂອງທ່ານ ແລະລະບຸວ່າເງິນທີ່ຈ່າຍຊຳລະແມ່ນສຳລັບເງິນຊ່ວຍເຫຼືອຍ້ອນຫຼັງ.

____________________________
ຕົວແທນພະແນກ EDD